ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 146/ນຍ

ນະຄອນຫຼວງວຽງຈັນ, ວັນທີ 08/05/2017

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງອົງການກວດກາລັດຖະບານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ ແລະ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016;
- ອີງຕາມ ໜັງສືສະເໜີຂອງອົງການກວດກາລັດຖະບານ ສະບັບເລກທີ 468/ອກລ, ລົງວັນທີ 27 ຕຸລາ 2016 ແລະ ໜັງສືແຈ້ງຕອບ ສະບັບເລກທີ 68/ອກລ, ລົງວັນທີ 30 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 99 /ພນ, ລົງວັນທີ 25 ເມສາ 2016.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການ ຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການດັ່ງກ່າວ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານກວດກາ, ສະກັດກັ້ນ-ຕ້ານການສໍ້ລາດບັງຫຼວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ອົງການກວດກາລັດຖະບານ ຂຽນດ້ວຍຫຍໍ້ (ອກລ) ແມ່ນກົງຈັກໜຶ່ງຂອງລັດຖະບານ ແລະ ເປັນອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ; ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ

ໃນການຄຸ້ມຄອງມະຫາພາກກ່ຽວກັບວຽກງານກວດກາລັດ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ວຽກງານການຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີຂອງພົນລະເມືອງ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ອົງການກວດກາລັດຖະບານ ມີໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳຕ່າງໆຂອງລັດຖະບານ;
2. ຄົ້ນຄວ້າ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການແກ້ໄຂຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ແລະ ໄດ້ຮັບຜົນດີ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການແກ້ໄຂຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ ເພື່ອສະເໜີລັດຖະບານພິຈາລະນາ;
4. ໂຄສະນາເຜີຍແຜ່ນະໂຍບາຍ, ກົດໝາຍ, ແຈ້ງການ, ຄຳສັ່ງ ແລະ ບົດແນະນຳ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ, ວຽກງານຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີຂອງພົນລະເມືອງ ດ້ວຍວິທີການອອກສື່ປະເພດຕ່າງໆ;
5. ຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ ຕໍ່ກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງຂອງການຈັດຕັ້ງ ຫຼື ພະນັກງານ ໂດຍສະເພາະແມ່ນພະນັກງານຂັ້ນສູນກາງຄຸ້ມຄອງທີ່ເປັນການລະເມີດ ມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ; ຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີ ທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ແຂວງ, ນະຄອນຫຼວງ ໄດ້ແກ້ໄຂແລ້ວແຕ່ພົນລະເມືອງ ຜູ້ນັ້ນເຫັນວ່າຍັງບໍ່ທັນເໝາະສົມ;
6. ຕິດຕາມການປະຕິບັດກົດໝາຍ, ຂໍ້ຕົກລົງ, ຄຳສັ່ງ, ແຜນການ, ໜ້າທີ່-ສິດ, ຄວາມຮັບຜິດຊອບ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ແຂວງ, ນະຄອນຫຼວງ, ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ຂັ້ນສູນກາງຄຸ້ມຄອງ; ຕິດຕາມ, ກວດກາການບໍລິຫານລັດ, ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ; ການຄຸ້ມຄອງນຳໃຊ້ຊັບພະຍາກອນຂອງຊາດ ແລະ ຊັບສິນຂອງລັດ; ກວດກາ ເມື່ອມີປະກົດການລະເມີດກົດໝາຍ ໃນການປະຕິບັດໜ້າທີ່ ຂອງການຈັດຕັ້ງລັດ ແລະ ພະນັກງານ-ລັດຖະກອນ ຂັ້ນສູນກາງຄຸ້ມຄອງ;
7. ຕິດຕາມ, ກວດກາການລົງທຶນກໍ່ສ້າງພື້ນຖານໂຄງລ່າງຕ່າງໆໂດຍ ການນຳໃຊ້ທຶນຂອງລັດລວມທັງທຶນກູ້ຢືມ, ທຶນຊ່ວຍເຫຼືອລ້າ ແລະ ກອງທຶນອື່ນໆ ຂອງລັດ, ດ້ວຍວິທີ: ດຳເນີນການຕິດຕາມ, ກວດກາເລີ່ມແຕ່ຫົວທີ, ຕິດຕາມ, ກວດກາເປັນປົກກະຕິ, ກວດກາຕາມຜົນຂອງການກວດສອບ ແລະ ກວດກາໂຄງການທີ່ມີບັນຫາ ລະເມີດກົດໝາຍ ແລະ ລະບຽບການຕ່າງໆຂອງລັດ;

8. ຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຢູ່ໃນອົງການບໍລິຫານລັດຂັ້ນສູນກາງ, ແຂວງ, ນະຄອນຫຼວງ, ລັດວິສາຫະກິດ, ລັດວິສາຫະກິດປະສົມ, ລັດຫຸ້ນສ່ວນ ແລະ ພະນັກງານ ທີ່ຂຶ້ນກັບການຄຸ້ມຄອງ ຂອງສູນກາງ;
9. ຕິດຕາມ, ກວດກາ ການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານຂັ້ນສູນກາງຄຸ້ມຄອງ ຕາມລະບຽບການທີ່ໄດ້ກຳນົດ;
10. ດຳເນີນການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງ, ສະຫຼຸບ ແລະ ປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນພິຈາລະນາ ຕາມທີ່ໄດ້ກຳນົດໃນກົດໝາຍ;
11. ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ຜົນຂອງການກວດກາປົກກະຕິ ແລະສະເພາະເປົ້າໝາຍໃດໜຶ່ງຕາມການຕົກລົງ ຂອງນາຍົກລັດຖະມົນຕີ;
12. ສະເໜີລົບລ້າງ ຫຼື ປ່ຽນແປງກ່ຽວກັບການກະທຳ ຫຼື ການຕົກລົງໃດໜຶ່ງ ຂອງການຈັດຕັ້ງລັດ, ພະນັກງານ ທີ່ສູນກາງຄຸ້ມຄອງ ເມື່ອເຫັນວ່າລະເມີດກົດໝາຍ ແລະ ລະບຽບການ;
13. ສະເໜີ ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ແຂວງ, ນະຄອນຫຼວງ ໂຈະການ ປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາ ທີ່ເຫັນວ່າ ບໍ່ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ;
14. ສະຫຼຸບສັງລວມ, ລາຍງານສະພາບການເຄື່ອນໄຫວ ວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການພິຈາລະນາຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ ແລະ ຜົນຂອງການກວດກາ ໃຫ້ນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ; ສະຫຼຸບຕີລາຄາຜົນຂອງການກວດກາ ແລະ ສະເໜີຮູບການ, ມາດຕະການການແກ້ໄຂ ຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາຕາມກົດໝາຍ ແລະ ລະບຽບການ;
15. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ອົງການປົກຄອງ, ຄະນະກວດກາລັດຢູ່ຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ບັນດາແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ;
16. ຄົ້ນຄວ້າສ້າງ ແລະ ປັບປຸງກົງຈັກການຈັດຕັ້ງ ຂອງອົງການກວດກາລັດແຕ່ລະຂັ້ນ; ຄຸ້ມຄອງພະນັກງານ-ລັດຖະກອນ ຕາມກົດໝາຍ-ລະບຽບການ ແລະ ຕິດພັນກັບການສົ່ງເສີມບົດບາດຍິງ-ຊາຍ; ຄຸ້ມຄອງ ແລະ ກຳນົດຕຳແໜ່ງງານ, ສ້າງແຜນການບຳລຸງ-ກໍ່ສ້າງ; ຄົ້ນຄວ້າ ແລະ ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ;
17. ຄົ້ນຄວ້າສ້າງແຜນງົບປະມານປະຈຳປີ, ສະເໜີດັດແກ້ງົບປະມານ, ອອກຂໍ້ກຳນົດຕ່າງໆໃນການຄຸ້ມຄອງ, ບໍລິຫານ, ນຳໃຊ້ງົບປະມານ, ພາຫະນະ, ອຸປະກອນ ແລະ ຊັບສິນຕ່າງໆ ຂອງອົງການຕົນໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ; ສະຫຼຸບລາຍງານການເຄື່ອນໄຫວວຽກງານຂອງອົງການກວດກາລັດຖະບານ ເພື່ອລາຍງານຂັ້ນເທິງເປັນປົກກະຕິ;
18. ພົວພັນຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ກ່ຽວກັບວຽກງານກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ປະຕິບັດສົນທິສັນຍາ, ສັນຍາທີ່ໄດ້ເຊັນກັນແລ້ວ;
19. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ ແລະ ນາຍົກລັດຖະມົນຕີ.

**ມາດຕາ 4 ຂອບເຂດສິດ**

ອົງການກວດກາລັດຖະບານ ມີສິດດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງກົດໝາຍ, ດຳລັດ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານກວດກາລັດ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ວຽກງານຄົ້ນຄວ້າແກ້ໄຂຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ ເພື່ອສະເໜີຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ພິຈາລະນາຕົກລົງ;
2. ສະເໜີຂັ້ນເທິງຕົກລົງດຳເນີນການກວດກາ ອົງການບໍລິຫານລັດຂັ້ນສູນກາງ, ແຂວງ, ນະຄອນຫຼວງ, ລັດວິສາຫະກິດ ແລະ ດຳເນີນການກວດກາ ພະນັກງານ-ລັດຖະກອນ ທີ່ສູນກາງຄຸ້ມຄອງ ໃນເມື່ອມີປະກົດການລະເມີດກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງລັດ;
3. ສະເໜີຕໍ່ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ແຂວງ, ນະຄອນຫຼວງ ໃຫ້ພິຈາລະນາ ປັບປຸງແກ້ໄຂ ຫຼື ລົບລ້າງເນື້ອໃນຂໍ້ຕົກລົງ, ຄຳສັ່ງ ແລະ ນິຕິກຳອື່ນໆ ທີ່ຂັ້ນດັ່ງກ່າວວາງອອກ ເມື່ອເຫັນວ່າບໍ່ສອດຄ່ອງກັບກົດໝາຍ;
4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ;
5. ຮຽກເຊີນເປົ້າໝາຍທີ່ຖືກກວດກາ, ການຈັດຕັ້ງທີ່ກ່ຽວຂ້ອງ, ພະຍານ, ຊ່ຽວຊານ, ຜູ້ຍື່ນ ຄຳຮ້ອງ-ຄຳສະເໜີ ມາລາຍງານ, ໃຫ້ຄຳຊີ້ແຈງ, ອະທິບາຍພ້ອມທັງປະກອບເອກະສານ, ຫຼັກຖານ ຫຼື ຂໍ້ມູນທີ່ກ່ຽວຂ້ອງກັບການກວດກາ;
6. ທວງເອົາເອກະສານຫຼັກຖານ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກວດກາຈາກບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
7. ສະເໜີໂຈະຊົ່ວຄາວການແຕ່ງຕັ້ງ, ສັບຊ້ອນ, ການຍົກຍ້າຍ ຫຼື ການປະຕິບັດໜ້າທີ່ ຂອງຜູ້ທີ່ຖືກກວດກາ ໃນເວລາການກວດກາບໍ່ທັນສຳເລັດ ຫຼື ເຫັນວ່າຈະມີຜົນກະທົບ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ການກວດກາ;
8. ຕິດຕາມ, ກວດກາ, ຊຸກຍູ້ ເພື່ອຮັບປະກັນໃຫ້ຄຳຕັດສິນຂອງສານກ່ຽວກັບຄະດີສໍ້ລາດບັງຫຼວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
9. ຄົ້ນຄວ້ານຳສະເໜີທ່ານນາຍົກລັດຖະມົນຕີ ແຕ່ງຕັ້ງຄະນະສະເພາະກິດ ເພື່ອດຳເນີນການກວດກາບັນຫາໃດໜຶ່ງທີ່ມີຄວາມສັບສົນ ແລະ ມີການພົວພັນເຖິງຫຼາຍກະຊວງ, ອົງການ ແລະ ແຂວງ, ນະຄອນຫຼວງ;
10. ພິຈາລະນາ, ຕົກລົງ ແລະ ນຳໃຊ້ມາດຕະການຕ່າງໆ ຕໍ່ຜູ້ທີ່ຖືກກວດກາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
11. ອອກຄຳສັ່ງເປີດການສືບສວນ-ສອບສວນ, ພາຕົວ, ກັກຕົວ, ດຳເນີນການສືບສວນ-ສອບສວນ ແລະ ສະຫຼຸບລາຍງານ ພ້ອມທັງປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຂຶ້ນສານ ກ່ຽວກັບຄະດີການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
12. ປະທານ, ຮອງປະທານ ຫຼື ຜູ້ຕາງໜ້າ ອົງການກວດກາລັດຖະບານ ມີສິດເຂົ້າຮ່ວມ ຕິດຕາມຊີ້ນຳກອງປະຊຸມວຽກງານກວດກາ ຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ;
13. ແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຊັ້ນ, ຍ້ອງຍໍ, ລົງວິໄນ, ສຶກສາອົບຮົມ, ຄຸ້ມຄອງ, ບຳລຸງ-ກໍ່ສ້າງ, ນຳໃຊ້ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນກວດກາ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
14. ເຊັນບົດບັນທຶກການຮ່ວມມືກັບຕ່າງປະເທດ ແລະ ການຈັດຕັ້ງສາກົນກ່ຽວກັບວຽກງານ ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມພາລະບົດບາດຂອງຕົນ ແລະ ຕາມການເຫັນດີມອບໝາຍຂອງລັດຖະບານ
15. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ ແລະ ນາຍົກລັດຖະມົນຕີ.

## ໝວດທີ 3
### ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກຂອງອົງການກວດກາລັດຖະບານ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມພົວພັນຕ່າງປະເທດ;
4. ກົມຄົ້ນຄວ້າ ແລະ ວາລະສານກວດກາ;
5. ກົມຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີ;
6. ກົມກວດກາລັດ ອ້ອມຂ້າງສູນກາງ;
7. ກົມກວດກາລັດ ທ້ອງຖິ່ນ;
8. ກົມກວດກາຕ້ານການສໍ້ລາດບັງຫຼວງ;
9. ກົມສືບສວນ-ສອບສວນການສໍ້ລາດບັງຫຼວງ;
10. ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ;

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງກະກອບບຸກຄະລາກອນ ຂອງອົງການກວດກາລັດຖະບານ ປະກອບດ້ວຍ:

1. ປະທານອົງການ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງອົງການຕາມດໍາລັດສະບັບນີ້.

   ໃນເວລາຕິດຂັດ ປະທານຕ້ອງມອບສິດໃຫ້ຮອງປະທານທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ.
2. ຮອງປະທານຈໍານວນໜຶ່ງ ຊ່ວຍປະທານ ໃນການຊີ້ນໍາວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານພາຍໃນຄະນະນໍາອົງການ ແລະ ການມອບໝາຍຂອງປະທານ.

   ຮອງປະທານເປັນຜູ້ຮັກສາການແທນ ໃນເວລາປະທານຕິດຂັດ ແລະ ຕ້ອງລາຍງານວຽກງານທີ່ໄດ້ປະຕິບັດໃນໄລຍະຮັກສາການໃຫ້ປະທານ ພາຍຫຼັງກັບມາປະຈໍາການ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

ສໍາລັບການແຕ່ງຕັ້ງ, ບັນຈຸ, ສັບຊ້ອນ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກໍານົດ.

## ໝວດທີ 4
### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງອົງການກວດກາລັດຖະບານ;

2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງອົງການ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການກຳນົດ ແລະ ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍແຕ່ລະໄລຍະ;
2. ເຮັດວຽກມີການຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນ ເປັນປົກກະຕິແຕ່ລະເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ;
3. ປະສານສົມທົບກັບອົງການກວດສອບແຫ່ງລັດ, ອົງການໄອຍະການປະຊາຊົນ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ອົງການການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງຂັ້ນຕ່າງໆ ແນໃສ່ໜູນໃຊ້ກຳລັງແຮງຂອງທຸກພາກສ່ວນເຂົ້າໃນການເຄື່ອນໄຫວວຽກງານກວດກາ, ຕິດຕາມ ກວດກາການແກ້ໄຂຜົນ ຂອງການກວດກາ ແລະ ເພື່ອພັດທະນາວຽກງານຂອງຂະແໜງການກວດກາລັດຖະບານ;
4. ປະທານ, ຮອງປະທານ ອົງການກວດກາກວດກາລັດຖະບານ ປະຕິບັດລະບອບລົງເຄື່ອນໄຫວຕິດຕາມ , ຊຸກຍູ້ວຽກງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ຢູ່ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ແຂວງ, ນະຄອນຫຼວງ ໃຫ້ເປັນປົກກະຕິ;
5. ປະຕິບັດລະບອບລາຍງານ, ຂໍຄຳເຫັນຈາກນາຍົກລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ເປັນປົກກະຕິ; ກໍລະນີມີບັນຫາຮີບດ່ວນ ກໍ່ລາຍງານຂໍທິດຊີ້ນຳໃຫ້ທັນເວລາ;
6. ປະຕິບັດລະບອບດຳເນີນຊີວິດການເມືອງເປັນປົກກະຕິ, ດຳເນີນກອງປະຊຸມວຽກງານກວດກາທົ່ວປະເທດ ປີລະເທື່ອ; ຈັດກອງປະຊຸມຄະນະ ເດືອນລະເທື່ອ ແລະ ໃນກໍລະນີ ມີວຽກຈຳເປັນຮີບດ່ວນກໍ່ສາມາດຈັດກອງປະຊຸມວິສາມັນໄດ້.

## ໝວດທີ 5
### ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

1. ອົງການກວດກາລັດຖະບານ ມີງົບປະມານ ( ງົບປະມານ ຂັ້ນໜຶ່ງ) ຮ່ວມກັບຄະນະກວດກາສູນກາງພັກ ແລະ ມີງົບປະມານຮອງຮັບ ກໍລະນີ ເຄື່ອນໄຫວຕາມຄຳສັ່ງຂອງຂັ້ນເທິງ;
2. ອົງການກວດກາລັດຖະບານ, ຫ້ອງການ, ບັນດາກົມ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ປະທານອົງການກວດກາລັດຖະບານ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ແລະ ບັນດາກົມ ທີ່ກຳນົດໃນມາດຕາ 5 ຂອງດຳລັດສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11  ການຈັດຕັ້ງປະຕິບັດ**

ອົງການກວດກາລັດຖະບານ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12  ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດສະບັບເລກທີ 245/ນຍ, ລົງວັນທີ 16 ສິງຫາ 2011.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ